ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ທຄຕລ ລະດົມທຶນຈາກພະນັກງານ

## ເພື່ອຊ່ວຍເຫຼືອຜູ້ປະສົບໄພພິບັດນ້ຳຖ້ວມ ທີ່ ເມືອງ ສະໜາມໄຊ, ແຂວງ ອັດຕະປື

ໃນວັນສຸກ ວັນທີ 10 ສິງຫາ 2018 ທີ່ສຳນັກງານອົງການປົກຄອງ ແຂວງ ອັດຕະປື ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ມອບທຶນຊ່ວຍເຫຼືອຜູ້ປະສົບໄພພິບັດນ້ຳຖ້ວມເປັນຈຳນວນເງິນ **103.375.705 ກີບ** ຕາງໜ້າມອບໂດຍ ທ່ານ ເພັດພູວັນ ເຮືອງປັນຍາ ຫົວໜ້າ ທຄຕລ ສາຂາອັດຕະປື ພ້ອມຄະນະ ແລະ ຈາກ 3 ອົງການຈັດຕັ້ງມະຫາຊົນ ຂອງ ທຄຕລ ເພື່ອຊ່ວຍເຫຼືອຜູ້ປະສົບໄພພິບັດນ້ຳຖ້ວມທີ່ ແຂວງ ອັດຕະປື, ຕາງໜ້າຮັບທຶນຊ່ວຍເຫຼືອໃນຄັ້ງນີ້ໂດຍ ທ່ານ ເລັດ ໄຊຍະພອນ ເລຂາພັກແຂວງ ເຈົ້າແຂວງໆອັດຕະປື. ເງິນຈຳນວນດັ່ງກ່າວແມ່ນໄດ້ມາຈາກການລະດົມທຶນຈາກພະນັກງານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທົ່ວລະບົບລວມມີ 15 ພະແນກ ແລະ 20 ສາຂາ.

ເງິນຈຳນວນດັ່ງກ່າວນີ້ ແມ່ນບໍ່ໄດ້ລວມເຂົ້າໃນໂຄງການລະດົມທຶນຊ່ວຍເຫຼືອຜູ້ປະສົບໄພພິບັດນ້ຳຖ້ວມ ທີ່ ແຂວງ ອັດຕະປື ຜ່ານ OneHeart ໂດຍຈະໄດ້ໂອນເງິນທັງໝົດນີ້ເຂົ້າບັນຊີຄັງເງິນແຫ່ງຊາດເພື່ອນຳໃຊ້ເຂົ້າໃນການຊ່ວຍເຫຼືອ ແລະ ແກ້ໄຂຊີວິດການເປັນຢູ່ຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດນ້ຳຖ້ວມ ພາຍໃຕ້ການຄຸ້ມຄອງຂອງຄະນະກຳມະການຟື້ນຟູ ແລະ ແກ້ໄຂຜົນກະທົບຈາກໄພນ້ຳຖ້ວມ ທີ່ ເມືອງ ສະໜາມໄຊ, ແຂວງ ອັດຕະປື ຄັ້ງນີ້ອີກດ້ວຍ.

